# ການຕິດຕັ້ງເຄື່ອງປ່ຽນສັນຍານພາບດິຈິຕອນເປັນສັນຍານພາບທຳມະດາ (ຂໍ້ມູນພື້ນຖານ)

## FCC ຂໍ້ເທັດຈິງສຳລັບຜູ້ຊົມໃຊ້

ໃບຂໍ້ມູນນີ້ອະທິບາຍກ່ຽວກັບວິທີຕິດຕັ້ງເຄື່ອງປ່ຽນສັນຍານພາບດິຈິຕອນເປັນສັນຍານພາບທຳມະດາ ເຂົ້າກັບຫູ້ກອັງແຕນ ແລະ ໂທລະພາບແບບເກົ່າຂອງທ່ານ. ຂໍ້ແນະນຳນີ້ຈະຊ່ວຍທ່ານກະກຽມເພື່ອວ່າເມື່ອທ່ານຊື້ເຄື່ອງປ່ຽນສັນຍານພາບມາ ທ່ານກໍ່ຈະຮູ້ສິ່ງທີ່ຄາດຫວັງ ແລະ ຮູ້ວ່າທ່ານຈະຕ້ອງການຄວາມຊ່ວຍເຫຼືອໃນການຕິດຕັ້ງຫຼືບໍ່.



ສາຍສຽບ

**ອຸປະກອນ:** ທ່ານຈະຕ້ອງມີໂທລະພາບແບບເກົ່າ, ຫູ້ກຮັບສັນຍານອັງແຕນທີ່ໃຊ້ຢູ່ (ແບບໃນເຮືອນ ຫຼື ນອກເຮືອນ), ແລະ ສາຍສຽບທີ່ປະຈຸບັນໃຊ້ເຊື່ອມຕໍ່ອັງແຕນຂອງທ່ານເຂົ້າກັບໜ່ວຍໂທລະພາບ (ເບິ່ງຮູບດ້ານຂວາມື). ເຄື່ອງປ່ຽນສັນຍານໃໝ່ຂອງທ່ານຈະມາພ້ອມກັບສາຍສຽບຂອງມັນ ແລະ ຣີໂມດຄວບຄຸມທາງໄກ. ກ່ອນທີ່ທ່ານຈະເລີ້ມຕົ້ນຕິດຕັ້ງເຄື່ອງປ່ຽນສັນຍານນີ້, ທ່ານຄວນຖອດສາຍປັກສຽບຕ່າງໆອອກຈາກໂທລະພາບຂອງທ່ານ.

| | |
|---|---|
| ບາດກ້າວ ❶ ຖອດສາຍສຽບທີ່ມີຢູ່ຂອງອັງແຕນອອກຈາກຮູບ່ອນສຽບ “ສາຍອັງແຕນເຂົ້າ RF)”ທີ່ຢູ່ເທິງໜ່ວຍໂທລະພາບຂອງທ່ານ. |  |
| ບາດກ້າວ ❷ ສຽບສາຍສຽບທີ່ມີຢູ່ໃສ່ໃນຮູ “ສາຍອັງແຕນເຂົ້າ (RF)” ຢູ່ເທິງເຄື່ອງປ່ຽນສັນຍານ. |  |
| ບາດກ້າວ ❸ ໂດຍໃຊ້ສາຍສຽບທີ່ມາພ້ອມກັບເຄື່ອງປ່ຽນສັນຍານ, ສຽບສົ້ນໜຶ່ງໃສ່ຮູ “ສາຍອອກໄປຫາໂທລະພາບ (RF)” ຢູ່ເທິງເຄື່ອງປ່ຽນສັນຍານພາບ ແລະ ສຽບອີກສົ້ນໜຶ່ງໃສ່ຮູ “ສາຍອັງແຕນເຂົ້າ (RF)” ຢູ່ເທິງໜ່ວຍໂທລະພາບຂອງທ່ານ. |  |

ບາດກ້າວ ❹ ສຽບສາຍໄຟຂອງເຄື່ອງປ່ຽນສັນຍານພາບ ແລະ ຂອງໂທລະພາບ ໃສ່ປັກສຽບໄຟ, ແລະ ຈາກນັ້ນ ເປີດໂທລະພາບ ແລະ ເຄື່ອງປ່ຽນສັນຍານພາບ. ໂດຍນຳໃຊ້ຄຳແນະນຳທີ່ມາພ້ອມກັບເຄື່ອງປ່ຽນສັນຍານພາບຂອງທ່ານ, ປັບໂທລະພາບຂອງທ່ານໄປຊ້ອງ 3 ຫຼື ຊ້ອງ 4. ໂດຍນຳໃຊ້ຣີໂມດຄວບຄຸມທີ່ມາພ້ອມກັບເຄື່ອງປ່ຽນສັນຍານພາບຂອງທ່ານ, ໃຫ້ປະຕິບັດຕາມຄຳແນະນຳການຕິດຕັ້ງທີ່ປະກົດໃນໜ້າຈໍ ເພື່ອຊອກຫາຊ້ອງໂທລະພາບດິຈິຕອນຕ່າງໆທີ່ມີ, ແລະ ເລີ່ມຕົ້ນເພີດເພີນກັບຜົນປະໂຫຍດຈາກໂທລະພາບດິຈິຕອນໄດ້ເລີຍ!

- ຖ້າເຄື່ອງປ່ຽນສັນຍານພາບຂອງທ່ານປະກອບມີຄຸນສົມບັດ “ອະນຸຍາດສັນຍານພາບແອນາລອັກ”, ການຕິດຕັ້ງນີ້ຈະຍັງອະນຸຍາດໃຫ້ທ່ານໄດ້ຮັບສັນຍານພາບຈາກສະຖານີທີ່ອອກອາກາດໃນລະບົບແອນາລອັກແບບຄົ້ນທຳມະດາ ໃນເຂດພື້ນທີ່ທ່ານ. ປະຕິບັດຕາມຄຳແນະນຳທີ່ມາພ້ອມກັບເຄື່ອງປ່ຽນສັນຍານພາບ ສຳລັບວິທີຄົ້ນຫາຊ້ອງສັນຍານແບບທຳມະດາ.
- ສຳລັບຄຳແນະນຳກ່ຽວກັບວິທີເຊື່ອມຕໍ່ເຄື່ອງປ່ຽນສັນຍານພາບ ຖ້າມັນບໍ່ມີຄຸນສົມບັດອະນຸຍາດສັນຍານພາບແອນາລອັກຜ່ານ ຫຼື ສຳລັບຄຳແນະນຳກ່ຽວກັບວິທີເຊື່ອມຕໍ່ເຄື່ອງປ່ຽນສັນຍານພາບເຂົ້າກັບອຸປະກອນສ່ວນອື່ນເຊັ່ນວ່າ ເຄື່ອງ VCR, ໃຫ້ເບິ່ງໃນເວັບໄຊ www.dtv.gov ຫຼື ຕິດຕໍ່ຫາ FCC ທາງອີເມວທີ່ dtvinfo@fcc.gov; ຫຼື ໂທຫາໝາຍເລກ 1-888-ຕໍ່ສາຍ-FCC (1-888-225-5322) ສຳລັບຄົນທົ່ວໄປ ຫຼື 1-888-ໂທຫາ-FCC (1-888-835-5322) ສຳລັບຄົນຫູໜວກ.

*ເອກະສານນີ້ແມ່ນມີຈຸດປະສົງເພື່ອສຶກສາໃຫ້ຄວາມຮູ້ແກ່ຜູ້ບໍລິໂພກເທົ່ານັ້ນ ແລະ ບໍ່ມີເຈດຕະນາສິ່ງຜົນກະທົບຕໍ່ກັບການໄຕ່ສວນ ຫຼື ຄະດີຕ່າງໆທີ່ພົວພັນກັບຫົວຂໍ້ນີ້ ຫຼື ປະເດັນຕ່າງໆທີ່ກ່ຽວຂ້ອງ.*



FCC
Federal Communications Commission ▪ Consumer & Governmental Affairs Bureau ▪ 445 12th St., SW ▪ Washington, DC 20554
1-888-CALL-FCC (1-888-225-5322) ▪ TTY: 1-888-TELL-FCC (1-888-835-5322) ▪ Fax: 1-866-418-0232 ▪ www.fcc.gov/cgb